ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ

041 51

ເລກທີ: . . . . . . . /ກພສ

06 AUG 2018

ນະຄອນຫຼວງວຽງຈັນ, ວັນທີ: . . . . . . . . .

# ແຈ້ງການເພີ່ມເຕີມ

## ວ່າດ້ວຍການກຳນົດເລກລະຫັດເງື່ອນໄຂໃນການຊຳລະສະສາງ ຄ່າພາສີ-ອາກອນ ແລະ ພັນທະອື່ນໆ ຂອງສິນຄ້າເຂດເສດຖະກິດສະເພາະ ນິຄົມອຸດສາຫະກຳ

- ອີງຕາມ ກົດໝາຍວ່າດ້ວຍພາສີ, ສະບັບເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ, ສະບັບເລກທີ: 73/ນຍ, ລົງວັນທີ: 28 ກັນຍາ 2015, ວ່າດ້ວຍນະໂຍບາຍສົ່ງເສີມເພີ່ມເຕີບ ຂອງການລົງທຶນຢູ່ເຂດເສດຖະກິດສະເພາະ ບຶງທາດຫຼວງ ແລະ ຂພສ ໃນຂອບເຂດທົ່ວປະເທດ;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ, ສະບັບເລກທີ: 2276/ກງ, ລົງວັນທີ: 12 ກໍລະກົດ 2016, ວ່າດ້ວຍການຍົກເວັ້ນອາກອນມູນຄ່າເພີ່ມໃຫ້ແກ່ ບໍລິສັດອິນຊີທອງມໍເຕີ້ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ.
- ອີງຕາມ ຂໍ້ຕົກລົງຂອງກົມພາສີ, ສະບັບເລກທີ: 00172/ກພສ, ລົງວັນທີ: 16 ຕຸລາ 2013, ວ່າດ້ວຍການນຳໃຊ້ເລກລະຫັດລະບອບໃບແຈ້ງພາສີເປັນລາຍລະອຽດ.

## ຫົວໜ້າກົມພາສີ ອອກແຈ້ງການເພີ່ມເຕີມ:

1. ເພື່ອເປັນການເພີ່ມເງື່ອນໄຂການຊໍລະຄ່າພາສີ-ອາກອນ ແລະ ພັນທະອື່ນໆ ຂອງຂໍ້ຕົກລົງຂອງກົມພາສີ, ສະບັບເລກທີ: 00172/ກພສ, ລົງວັນທີ: 16 ຕຸລາ 2013 ໃນມາດຕາ ທີ 4 ວ່າດ້ວຍການກຳນົດ ລະຫັດ 3 ຕົວເລກສຸດທ້າຍ ຂອງການຊຳລະແຕ່ລະເງື່ອນໄຂ ໃນຫ້ອງທີ 37 ຂອງໃບແຈ້ງພາສີເປັນລາຍລະອຽດ ແມ່ນຈັດຕັ້ງປະຕິບັດດັ່ງລາຍລະອຽດລຸ່ມນີ້:
   - ລະຫັດ 441: ຍົກເວັ້ນຄ່າພາສີ, ຍົກເວັ້ນອາກອນມູນຄ່າເພີ່ມ ແລະ ເສຍພັນທະອື່ນໆ ຕາມລະບຽບການ ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າເພື່ອຜະລິດ ແລ້ວສົ່ງອອກຕ່າງປະເທດ ຢູ່ເຂດເສດຖະກິດພິເສດ ແລະ ສະເພາະ;
   - ລະຫັດ 442: ຍົກເວັ້ນຄ່າພາສີ, ເສຍອາກອນມູນຄ່າເພີ່ມ ໃນອັດຕາ 5% ແລະ ພັນທະອື່ນໆ ຕາມລະບຽບການ ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າ ແລະ ຜະລິດຢູ່ເຂດເສດຖະກິດພິເສດ ແລະ ສະເພາະ;
   - ລະຫັດ 443: ເສຍພາສີຕາມອັດຕາຫຼຸດຜ່ອນ ຕາມກອບສິດທິພິເສດຕ່າງໆ, ຍົກເວັ້ນອາກອນມູນຄ່າເພີ່ມ ແລະ ເສຍພັນທະອື່ນໆ ຕາມລະບຽບການ.
2. ມອບໃຫ້ບັນດາພາສີສາກົນ ເອົາໃຈໃສ່ກວດກາການແຈ້ງພາສີເປັນລາຍລະອຽດ ໃນການນຳໃຊ້ລະບອບໃບແຈ້ງພາສີ ໂດຍສະເພາະແມ່ນເງື່ອນໄຂໃນການຊຳລະສະສາງ ໃຫ້ຖືກຕ້ອງຕາມລະບຽບການ.
3. ແຈ້ງການສະບັບນີ້ ແມ່ນມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ